ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
*****

ທະນາຄານແຫ່ງ ສ.ປ.ປ. ລາວ

ເລກທີ 478 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 28 NOV 2006

# ຂໍ້ຕົກລົງ

## ວ່າດ້ວຍ ລະບຽບການປະຕິບັດນະໂຍບາຍຕໍ່ພະນັກງານຕາມສັນຍາ ຂອງທະນາຄານແຫ່ງ ສປປ ລາວ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ1999;
- ອີງຕາມກົດໝາຍແຮງງານ ສະບັບເລກທີ 002/ສພຊ ລົງວັນທີ 14 ມີນາ 1994 ;
- ອີງຕາມຂໍ້ກຳນົດ ກ່ຽວກັບພະນັກງານຕາມສັນຍາຂອງທະນາຄານແຫ່ງ ສປປ ລາວ ສະບັບ ເລກທີ 05/ທຫລ ລົງວັນທີ 01 ພະຈິກ 2004;
- ອີງຕາມການເຫັນດີເປັນເອກະພາບຂອງຄະນະຜູ້ວ່າການ ແລະບັນດາຄະນະກົມກ່ຽວຂ້ອງ.

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ :

**ມາດຕາ 1 :** ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດອອກເພື່ອເປັນບ່ອນອີງໃນການປະຕິບັດນະໂຍບາຍຕໍ່ພະນັກງານຕາມສັນຍາຂອງທະນາຄານແຫ່ງ ສປປ ລາວ, ເປັນການກະຕຸກຊຸກຍູ້ທາງດ້ານວັດຖຸ ແລະ ຈິດໃຈ ແກ່ພະນັກງານດັ່ງກ່າວ ໃຫ້ມີຄວາມຫ້າວຫັນບຸກບືນໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ ບັນລຸຜົນສຳເລັດ ແລະມີປະສິດທິຜົນສູງ.

**ມາດຕາ 2 :** ເປົ້າໝາຍຜູ້ທີ່ຈະໄດ້ຮັບນະໂຍບາຍ

ຜູ້ທີ່ຈະໄດ້ຮັບນະໂຍບາຍຕາມຂໍ້ຕົກລົງສະບັບນີ້ ແມ່ນພະນັກງານຕາມສັນຍາປະຈຳຂອງທະນາຄານແຫ່ງ ສປປ ລາວ ທີ່ໃນແຕ່ລະເດືອນໄດ້ເສຍເງິນເຂົ້າຄັງສະຫວັດດີການສັງຄົມຂອງທະນາຄານແຫ່ງ ສປປ ລາວ 6% ຂອງເງິນເດືອນພື້ນຖານຂອງແຕ່ລະຄົນ.

ທະນາຄານແຫ່ງ ສ.ປ.ປ. ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ ຕູ້ໄປສະນີ 19
ໂທລະພິມ: 4304 BNL. VTE.LS ໂທລະສານ : (856)-21-21 3108 ໂທລະສັບ : 213109-213110 E-mail:Bol@pan-laos.net.la

ພະນັກງານຕາມສັນຍາ ມີສິດໄດ້ຮັບນະໂຍບາຍ ດັ່ງນີ້ :

1. ເງິນເດືອນຕາມຂັ້ນ ແລະຂັ້ນເງິນເດືອນຂອງແຕ່ລະຄົນ ຕາມວຸດທິການສຶກສາທີ່ໄດ້ຮັບ ລະດັບເງິນເດືອນຂອງພະນັກງານ ແມ່ນທະນາຄານແຫ່ງ ສປປ ລາວ ໄດ້ກໍານົດຕ່າງຫາກ;
2. ເງິນແຮງງານເຮັດວຽກເພີ້ມໂມງ ແລະວັນພັກທາງລັດຖະການຕາມການອະນຸມັດຂອງການຈັດຕັ້ງ;
3. ເງິນອັດຕາໄປເຮັດວຽກຢູ່ທ້ອງຖິ່ນ ຫຼື ສູນກາງ ຄືກັບລັດຖະກອນ;
4. ເງິນອຸດໜູນທາດເບື່ອ ( ສໍາລັບພະນັກງານຜູ້ທີ່ເຮັດວຽກນໍາທາດເບື່ອ );
5. ເງິນທົດແທນຄ່າກວດສຸຂະພາບປະຈໍາປີ 400.000 ກີບ/ຄົນ/ປີ ແລະຕ້ອງສົ່ງຜົນກວດໃຫ້ກົມຈັດຕັ້ງ-ພະນັກງານ ກ່ອນວັນທີ 30 ເດືອນ 10 ຂອງທຸກໆປີ ( ສໍາລັບພະນັກງານຜູ້ທີ່ເຮັດວຽກນໍາທາດເບື່ອ, ເປັນຄູສອນປະຈໍາຢູ່ໂຮງຮຽນອານຸບານ ແລະສະຖາບັນການທະນາຄານ );
6. ອັດຕານໍ້າມັນ ຕາມທະນາຄານກໍານົດໃຫ້ໃນແຕ່ລະໄລຍະ;
7. ເງິນຕັດເຄື່ອງນຸ່ງ ( ຊຸດທໍາມະດາ ) ປະຈໍາປີ :

   - ຜູ້ທີ່ໄດ້ເຂົ້າການໃນໄລຍະຜ່ານມາ ແລະໃນໄລຍະ 6 ເດືອນ ຕົ້ນປີ ຂອງປີນັ້ນ ແຕ່ລະປີຈະໄດ້ຮັບເງິນຕັດເຄື່ອງນຸ່ງ 2 ຊຸດ ຕໍ່ ປີ;

   - ສໍາລັບຜູ້ທີ່ເຂົ້າການໃນໄລຍະ 6 ເດືອນ ທ້າຍປີ ຂອງປີນັ້ນ ຈະໄດ້ຮັບເງິນຕັດເຄື່ອງນຸ່ງ 1 ຊຸດ ຕໍ່ ປີ;
8. ເງິນບໍາເນັດປະຈໍາປີ ເທົ່າກັບເງິນເດືອນພື້ນຖານ 1 ເດືອນ ຂອງແຕ່ລະຄົນ. ຖ້າຫາກເຮັດວຽກບໍ່ເຖິງ 1 ປີ ເຕັມ, ຈະຄິດໄລ່ໃຫ້ຕາມຈໍານວນເດືອນທີ່ເຮັດວຽກຕົວຈິງໃນປີ;
9. ມີສິດລາພັກປະຈໍາປີ 15 ວັນ ຕໍ່ ປີ. ສໍາລັບຜູ້ທີ່ເຮັດວຽກກ່ຽວກັບທາດເບື່ອ ຫຼື ກໍາມັນຕະພາບລັງສີ ມີສິດພັກ 18 ວັນ ຕໍ່ ປີ;

   ສໍາລັບພະນັກງານຕາມສັນຍາ ທີ່ບໍ່ໄດ້ລາພັກປະຈໍາປີ ຫຼື ລາພັກບໍ່ຄົບຕາມຈໍານວນວັນທີ່ໄດ້ກໍານົດໄວ້ ທະນາຄານແຫ່ງ ສປປ ລາວ ຈະບໍ່ໄດ້ຄິດໄລ່ເງິນບໍ່ພັກການປະຈໍາປີໃຫ້;
10. ມີສິດພັກປິ່ນປົວພະຍາດ ຫຼື ຕາມຄໍາສັ່ງຂອງແພດໝໍ, ການພັກປິ່ນປົວພະຍາດສູງສຸດ ບໍ່ເກີນ 1 ເດືອນ, ຖ້າເກີນ ຈະຍົກເລີກສັນຍາຈ້າງງານຕໍ່ຜູ້ກ່ຽວ. ໃນຊ່ວງເວລາພັກປິ່ນປົວພະຍາດ ຈະໄດ້ຮັບເງິນເດືອນປົກກະຕິ;
11. ມີສິດພັກເກີດລູກ 3 ເດືອນ ໂດຍໄດ້ຮັບເງິນເດືອນ 100% ຂອງເງິນເດືອນພື້ນຖານແຕ່ລະຄົນ ແລະໄດ້ຮັບເງິນອຸດໜູນເກີດລູກ 60% ຂອງເງິນເດືອນພື້ນຖານຕໍ່າສຸດ ຖ້າຫາກໄດ້ເສຍເງິນເຂົ້າຄັງສະຫວັດດີການສັງຄົມຄົບຖ້ວນ ຢ່າງໜ້ອຍ 60% ຂອງເງິນເດືອນພື້ນຖານຕໍ່າສຸດ;

12. ມີສິດພັກແຕ່ງງານ, ພັກເບິ່ງແຍງເມຍເກີດລູກ, ພັກເບິ່ງແຍງຄອບຄົວເວລາເຈັບເປັນ, ພັກໃນເວລາເມຍ ຫຼື ຜົວ, ພໍ່, ແມ່ ແລະລູກຄົງຂອງຕົນເສຍຊີວິດ. ການພັກໃນແຕ່ລະກໍລະນີແຕ່ລະຄັ້ງ ບໍ່ເກີນ 5 ວັນ ແລະໃນປີໜຶ່ງ ບໍ່ເກີນ 15 ວັນ. ສ່ວນທີ່ເກີນ ຈະຄິດໄລ່ເປັນການລາພັກປະຈໍາປີຂອງຜູ້ກ່ຽວ;

13. ໄດ້ຮັບເງິນອຸດໜູນການປິ່ນປົວສຸຂະພາບ 30.000 ກີບ ຕໍ່ ເດືອນ ເພື່ອເປັນຄ່າໃຊ້ຈ່າຍໃນກໍລະນີເຈັບເປັນບໍ່ເຖິງຂັ້ນນອນໂຮງໝໍ. ໃນກໍລະນີເຈັບເປັນເຖິງຂັ້ນນອນໂຮງໝໍທະນາຄານແຫ່ງ ສປປ ລາວ ຈະທົດແທນຄ່າປິ່ນປົວໃຫ້ 80% ສໍາລັບໂຮງໝໍລັດ ແລະ 60% ສໍາລັບໂຮງໝໍເອກະຊົນ. ໃນການທົດແທນຄ່າປິ່ນປົວ ໃນປີໜຶ່ງບໍ່ເກີນ 5 ເທົ່າ ຂອງເງິນເດືອນພື້ນຖານ;

ກໍລະນີເຈັບເປັນຍ້ອນອຸປະຕິເຫດແຮງງານ ຫຼື ເຈັບເປັນໃນເວລາໄປວຽກທາງລັດຖະການ ທະນາຄານແຫ່ງ ສປປ ລາວ ຈະທົດແທນຄ່າປິ່ນປົວໃຫ້ 100% ;

14. ໃນກໍລະນີພະນັກງານເສຍຊີວິດ ທະນາຄານແຫ່ງ ສປປ ລາວ ຈະກິນທານນໍາ 3 ລ້ານ ກີບ. ຖ້າຜົວ ຫຼື ເມຍ, ພໍ່, ແມ່ ແລະລູກຕໍ່າກວ່າ 18 ປີ ຂອງພະນັກງານ ທີ່ບໍ່ໄດ້ເປັນພະນັກງານຂອງທະນາຄານ ແຫ່ງ ສປປ ລາວ ເສຍຊີວິດ, ທະນາຄານ ຈະກິນທານນໍາ 1 ລ້ານ ກີບ;

- ໃນກໍລະນີ ທີ່ ຜົວ, ເມຍ, ພໍ່, ແມ່ ແລະລູກ ເປັນພະນັກງານຕາມສັນຍາຂອງທະນາຄານແຫ່ງ ສປປ ລາວ ເສຍຊີວິດ, ທະນາຄານ ຈະກິນທານນໍາໃນອັດຕາດຽວທີ່ສູງສຸດ;
- ໃນກໍລະນີ ຜົວ ຫຼື ເມຍ ຜູ້ໜຶ່ງເປັນລັດຖະກອນ ແລະອີກຜູ້ໜຶ່ງເປັນພະນັກງານຕາມສັນຍາຢູ່ທະນາຄານແຫ່ງ ສປປ ລາວ, ແຕ່ຜູ້ເສຍຊີວິດ ເປັນພະນັກງານຕາມສັນຍາ ທະນາຄານ ຈະກິນທານນໍາໃນອັດຕາດຽວທີ່ສູງສຸດ;
- ໃນກໍລະນີ ພໍ່, ແມ່ ແລະລູກ ເປັນພະນັກງານຢູ່ທະນາຄານແຫ່ງ ສປປ ລາວ, ແຕ່ ພໍ່, ແມ່ ເປັນລັດຖະກອນ ສ່ວນລູກເປັນພະນັກງານຕາມສັນຍາ ຫາກເສຍຊີວິດ, ທະນາຄານຈະກິນທານນໍາໃນອັດຕາດຽວທີ່ສູງສຸດ.

<u>ມາດຕາ 4 :</u> ໃຫ້ຫ້ອງການ, ບັນດາກົມ ແລະຫຼຽບເທົ່າ, ບັນດາສາຂາ ແລະທຸກພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້, ຈັດຕັ້ງເຜີຍແຜ່ໃຫ້ພະນັກງານທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຮັບຮູ້-ເຂົ້າໃຈຢ່າງທົ່ວເຖິງ ແລະປະຕິບັດຂໍ້ຕົກລົງສະບັບນີ້ຕາມໜ້າທີ່ຂອງໃຜລາວ.

<u>ມາດຕາ 5 :</u> ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ. ທຸກນິຕິກໍາທີ່ນໍາໃຊ້ໃນເມື່ອກ່ອນ ຊຶ່ງຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ທະນາຄານແຫ່ງ ສ.ປ.ປ ລາວ
ຜູ້ວ່າການ

ພູເພັດ ຄໍາພູນວົງ